# ຂໍ້ກຳນົດ ແລະ ເງື່ອນໄຂການໃຊ້ບໍລິການ JDB Online Banking

JDB Online Banking ເປັນການໃຫ້ບໍລິການຂອງ ທຄຮ ຜ່ານເຄືອຂ່າຍອິນເຕີເນັດ ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຄ້າຜູ້ໃຊ້ບໍລິການ ສາມາດຈັດການທຸລະກຳທາງການເງິນຕ່າງໆ ທີ່ ທຄຮ ກຳນົດໄວ້ໃນປັດຈຸບັນ ແລະ ຈະເປີດໃຫ້ບໍລິການ ໃນອະນາຄົດ ໂດຍລູກຄ້າຜູ້ໃຊ້ບໍລິການ ຕົກລົງຍິນຍອມຜູກພັນຕາມຂໍ້ກຳນົດ ແລະ ເງື່ອນໄຂການໃຊ້ບໍລິການ JDB Online Banking ດັ່ງລຸ່ມນີ້:

## 1. ອະທິບາຍຄຳສັບ

1.1 **ທຄຮ:** ທະນາຄານຮ່ວມພັດທະນາ.

1.2 **JDB Online Banking**: ເປັນການໃຫ້ບໍລິການອອນລາຍຂອງ ທຄຮ ທີ່ລູກຄ້າສາມາດໃຊ້ບໍລິການຜ່ານເຄືອຂ່າຍອິນເຕີເນັດ ໄດ້ຕະຫຼອດ 24 ຊົ່ວໂມງ.

1.3 **ລູກຄ້າ:** ເປັນເຈົ້າຂອງບັນຊີເງິນຝາກ ຜູ້ມີສິດສັ່ງຈ່າຍ, ຄຸ້ມຄອງ, ນຳໃຊ້ບັນຊີເງິນຝາກ ແລະ ນຳໃຊ້ບໍລິການ JDB Online Banking ຕາມລະບຽບຂອງ ທຄຮ ແລະ ກົດໝາຍ ສປປ ລາວ.

1.4 **ຊອງລະຫັດລັບ:** ລະຫັດຜູ້ນຳໃຊ້ (User ID), ລະຫັດຜ່ານ (Password), ລະຫັດຜ່ານຄັ້ງດຽວ (OTP), SMS OTP, Email OTP...

## 2. ເງື່ອນໄຂການຂໍນຳໃຊ້ບໍລິການ JDB Online Banking

2.1 ຕ້ອງມີບັນຊີເງິນຝາກປະຢັດ ຫຼື ກະແສລາຍວັນ ຢູ່ກັບ ທຄຮ;

2.2 ຕ້ອງມີອຸປະກອນທີ່ສາມາດຮອງຮັບການນຳໃຊ້ລະບົບ JDB Online Banking ເຊັ່ນ: ຄອມພິວເຕີ, ສະມາດໂຟນ, ອິນເຕີເນັດ ແລະ ອື່ນໆ;

2.3 ມີອາຍຸ 15 ປີ ຂຶ້ນໄປ, ມີເບີໂທລະສັບ, ມືຖື ແລະ ອີເມວ ທີ່ສາມາດຕິດຕໍ່ໄດ້;

2.4 ປະກອບແບບຟອມ ແລະ ເອກະສານຄັດຕິດ ຖືກຕ້ອງ, ຄົບຖ້ວນ ຕາມທີ່ ທຄຮ ໄດ້ກຳນົດ.

## 3. ບໍລິການ JDB Online Banking

3.1 ສາມາດໂອນເງິນໄປບັນຊີອື່ນໄດ້ ຕາມຈຳນວນທີ່ ທຄຮ ກຳນົດໄວ້; ຊຳລະຄ່າສິນຄ້າ ຫຼື ບໍລິການ ສາທາລະນຸປະໂພກຕ່າງໆໄດ້;

3.2 ສາມາດເປີດບັນຊີເງິນຝາກປະຈຳ ໂດຍໂອນເງິນຈາກບັນຊີເງິນຝາກປະຢັດ ຫຼື ກະແສລາຍວັນ ທີ່ໄດ້ໃຊ້ບໍລິການ JDB Online Banking ເຊິ່ງຂໍ້ມູນ ແລະ ເງື່ອນໄຂການສັ່ງຈ່າຍຄືກັນ;

3.3 ສາມາດເລືອກໄລຍະເວລາໃນການຝາກປະຈຳ ແລະ ເງື່ອນໄຂການຮັບດອກເບ້ຍ ຢູ່ໃນລະບົບ JDB Online Banking; ສາມາດເລືອກເອົາປື້ມບັນຊີ ຫຼື ບໍ່ເອົາກໍໄດ້, ຖ້າຕ້ອງການເອົາປື້ມບັນຊີ ຕ້ອງໄດ້ແຈ້ງລາຍລະອຽດຂອງ User ID ທີ່ໃຊ້ບໍລິການ ແລະ Customer ID ມາຢັ້ງຢືນເອົາປື້ມບັນຊີ ທີ່ໜ່ວຍບໍລິການ ບ່ອນສະໝັກນຳໃຊ້ບໍລິການ JDB Online Banking, ຖ້າຫາກບໍ່ເອົາປື້ມບັນຊີ ເມື່ອຄົບກຳນົດ ລະບົບຈະປິດບັນຊີເງິນຝາກປະຈຳ ໂດຍອັດຕະໂນມັດ ແລະ ໂອນເງິນຕົ້ນທຶນພ້ອມດອກເບ້ຍ ເຂົ້າບັນຊີເງິນຝາກປະຢັດ ຫຼື ກະແສລາຍວັນຂອງລູກຄ້າ. ໃນກໍລະນີລູກຄ້າຕ້ອງການປິດບັນຊີເງິນຝາກປະຈຳ ກ່ອນກຳນົດ ຕ້ອງໄດ້ປະກອບແບບຟອມສະເໜີຫາໜ່ວຍບໍລິການ ທີ່ເປີດບັນຊີເງິນຝາກ ທີ່ຂໍນຳໃຊ້ບໍລິການ JDB Online Banking.

## 4. ສິດ ແລະ ຄວາມຮັບຜິດຊອບຂອງ ທຄຮ

4.1 ທຄຮ ມີສິດປ່ຽນແປງຂໍ້ກຳນົດ ແລະ ເງື່ອນໄຂນີ້ບາງສ່ວນ ຫຼື ທັງໝົດ; ປ່ຽນແປງຄ່າທຳນຽມບໍລິການຕ່າງໆຕາມສະນະໂຍບາຍຂອງ ທຄຮ ໃນແຕ່ລະໄລຍະ ໂດຍບໍ່ມີການແຈ້ງລ່ວງໜ້າ;

4.2 ທຄຮ ມີສິດຢຸດໃຫ້ບໍລິການບາງສ່ວນ ຫຼື ທັງໝົດ ຫຼື ໃຫ້ບໍລິການລູກຄ້າສະເພາະກຸ່ມ ໂດຍບໍ່ມີການແຈ້ງລ່ວງໜ້າ;

4.3 ທຄຮ ມີສິດຍົກເລີກການໃຊ້ບໍລິການເວລາໃດກໍໄດ້ ໂດຍບໍ່ແຈ້ງໃຫ້ລູກຄ້າຜູ້ໃຊ້ບໍລິການຊາບ ໃນກໍລະນີ ທຄຮ ບໍ່ສາມາດຫັກເງິນຄ່າທຳນຽມບໍລິການລາຍເດືອນ ຈາກບັນຊີເງິນຝາກຂອງລູກຄ້າຜູ້ໃຊ້ບໍລິການໄດ້ ແລະ ທຄຮ ມີສິດຮຽກເກັບເງິນຄ່າທຳນຽມທີ່ຍັງຄ້າງທັງໝົດກັບລູກຄ້າຜູ້ໃຊ້ບໍລິການ;

4.4 ທຄຮ ມີສິດຍົກເລີກການໃຊ້ບໍລິການ ໃນກໍລະນີ ລູກຄ້າຜູ້ໃຊ້ບໍລິການ ທີ່ບໍ່ປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ທີ່ກ່ຽວຂ້ອງກັບການບໍລິການ JDB Online Banking ຂອງ ທຄຮ;

4.5 ກໍລະນີລູກຄ້າຜູ້ໃຊ້ບໍລິການ ເຮັດທຸລະກຳດ້ານການເງິນຜ່ານລະບົບ JDB Online Banking ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ ຫຼື ລະເມີດລະບຽບຂອງ ທຄຮ, ທຄຮ ສາມາດດຳເນີນຄະດີກັບລູກຄ້າຜູ້ໃຊ້ບໍລິການຕາມລະບຽບກົດໝາຍ;

4.6 ສົ່ງຂໍ້ຄວາມ SMS Alert ແຈ້ງເຕືອນທຸກຄັ້ງ ເມື່ອມີລາຍການເຄື່ອນໄຫວໃນບັນຊີ ສຳລັບລູກຄ້າໄດ້ລົງທະບຽນນຳໃຊ້ບໍລິການ;

4.7 ທຄຮ ຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍຕ່າງໆ ທີ່ເກີດຂຶ້ນອັນເນື່ອງມາຈາກລູກຄ້າຜູ້ໃຊ້ບໍລິການບໍ່ປະຕິບັດຕາມເງື່ອນໄຂຕ່າງໆ ໂດຍລູກຄ້າຜູ້ໃຊ້ບໍລິການກົດລິ້ງທີ່ບໍ່ປອດໄພ ແລະ ອັບເດດຂໍ້ມູນໃຫ້ຜູ້ບໍ່ຫວັງດີສ້າງຄວາມເສຍຫາຍແກ່ຕົນເອງ;

4.8 ທຄຮ ຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍຕ່າງໆ ທີ່ເກີດຂຶ້ນກ່ອນການລະງັບ ຫຼື ຍົກເລີກນຳໃຊ້ບໍລິການ JDB Online Banking ຂອງລູກຄ້າຜູ້ໃຊ້ບໍລິການ;

4.9 ທຄຮ ຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍຕ່າງໆ ໃນກໍລະນີລູກຄ້າເຮັດຜິດກົດລະບຽບຂອງການໂອນເງິນໃນລະບົບ JDB Online Banking.

## 5. ສິດ ແລະ ຄວາມຮັບຜິດຊອບຂອງ ລູກຄ້າ

5.1 ເມື່ອລູກຄ້າໄດ້ຮັບລະຫັດ (PIN) ຈາກ ທຄຮ ເພື່ອເຂົ້າສູ່ລະບົບຄັ້ງທຳອິດແລ້ວ ຕ້ອງໄດ້ປ່ຽນໃຊ້ລະຫັດໃໝ່ຕາມຂັ້ນຕອນໃນລະບົບແບບອັດຕະໂນມັດ;

5.2 ລູກຄ້າ ຕ້ອງເກັບຮັກສາ User ID, Password ແລະ ຄຳຖາມຄວາມປອດໄພ ເປັນຄວາມລັບ, ໃນກໍລະນີລູກຄ້າ ລືມລະຫັດ ຫຼື ຂໍ້ມູນການນຳໃຊ້ ລູກຄ້າສາມາດກົດລືມລະຫັດຜ່ານ ແລະປ່ຽນລະຫັດຜ່ານແບບອອນລາຍໂດຍມີການກວດສອບຄວາມເປັນເຈົ້າຂອງບັນຊີ.

5.3 ການເພີ່ມ ຫຼື ປ່ຽນແປງຂໍ້ມູນບັນຊີເງິນຝາກ ລູກຄ້າຕ້ອງໄດ້ເຂົ້າມາພົວພັນກັບ ທຄຮ ໂດຍຖືບັດປະຈຳຕົວ ແລະ ປື້ມບັນຊີເງິນຝາກ ເພື່ອເປັນເອກະສານຢັ້ງຢືນ;

5.4 ລູກຄ້າຍິນດີໃຫ້ຄວາມຮ່ວມມື ໃນການກວດສອບການເຄື່ອນໄຫວທຸລະກຳທາງດ້ານການເງິນທັງໝົດທີ່ກ່ຽວຂ້ອງກັບການໃຊ້ບໍລິການ ເມື່ອມີການສະເໜີຂໍຂໍ້ມູນຈາກເຈົ້າໜ້າທີ່ຂອງລັດ ທີ່ມີສິດ ອຳນາດ ຫຼື ຕາມນະໂຍບາຍຂອງ ທຄຮ;

5.5 ລູກຄ້າທີ່ຂໍລົງທະບຽນ ຕ້ອງສະໜອງຂໍ້ມູນໃສ່ແບບຟອມສະໝັກ ແລະ ລົງລາຍເຊັນໃຫ້ຖືກຕ້ອງຄົບຖ້ວນຕາມເງື່ອນໄຂໃນບັນຊີເງິນຝາກ. ກໍລະນີລູກຄ້າ ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ແມ່ນເຈົ້າຂອງບັນຊີເງິນຝາກ ມາພົວພັນລົງທະບຽນ ຕ້ອງໄດ້ເຮັດໃບມອບສິດ ໃຫ້ຜູ້ຕາງໜ້າມາລົງທະບຽນແທນ;

5.6 ຖ້າມີການເຊັນຮ່ວມ 2 ລາຍເຊັນຂຶ້ນໄປ ຕ້ອງພ້ອມກັນລົງລາຍເຊັນ ໃສ່ແບບຟອມສະໝັກນຳໃຊ້ບໍລິການ JDB Online Banking ຈຶ່ງສາມາດເປີດໃຊ້ບໍລິການ;

5.7 ລູກຄ້າຕ້ອງປະຕິບັດຕາມຂັ້ນຕອນ, ຄູ່ມືການນຳໃຊ້, ຄຳແນະນຳ, ຂໍ້ກຳນົດ, ລະບຽບ, ແຈ້ງການ ຂອງ ທຄຮ ທີ່ກຳນົດອອກ ໃນແຕ່ລະໄລຍະ;

5.8 ກໍລະນີພົບຂໍ້ສົງໄສທີ່ຜິດປົກກະຕິ ຂອງການເຄື່ອນໄຫວທຸລະກຳ ໃນບັນຊີຂອງຕົນ ຕ້ອງແຈ້ງ ທຄຮ ຮັບຊາບທັນທີ ເພື່ອກວດສອບ;

5.9 ໃນການໂອນເງິນຫາບັນຊີຜູ້ອື່ນ ຈະມີການປ້ອງກັນຄວາມປອດໄພ ໂດຍການຕອບຄຳຖາມຄວາມປອດໄພກ່ອນ (Security Question). ກໍລະນີລູກຄ້າລືມຄຳຖາມຄວາມປອດໄພ ຕ້ອງເຂົ້າມາພົວພັນ ທຄຮ ເພື່ອຂຽນຟອມຂໍແກ້ໄຂຄຳຖາມຄວາມປອດໄພໃໝ່ ໃນວັນເວລາເຮັດວຽກຂອງ ທຄຮ;

5.10 ລູກຄ້າຜູ້ໃຊ້ບໍລິການ JDB Online Banking ຕ້ອງຮັກສາ User ID, Password, ລະຫັດ OTP ແລະ ລະຫັດອື່ນໆ ໃຫ້ເປັນຄວາມລັບສ່ວນຕົວ. ບຸກຄົນທີ່ຮູ້ User ID, Password ທີ່ເຂົ້າລະບົບໄດ້ ທຄຮ ຖືວ່າການດຳເນີນທຸລະກຳຕ່າງໆ ແມ່ນລູກຄ້າຜູ້ໃຊ້ບໍລິການ ເປັນຜູ້ດຳເນີນການເອງທັງໝົດ;

5.11 ກໍລະນີຂໍ້ມູນທາງບັນຊີຂອງລູກຄ້າຜູ້ໃຊ້ບໍລິການ JDB Online Banking ຖືກເປີດເຜີຍໃຫ້ແກ່ບຸກຄົນອື່ນເນື່ອງຈາກລູກຄ້າຜູ້ໃຊ້ບໍລິການເອງ, ລູກຄ້າຜູ້ໃຊ້ບໍລິການຕ້ອງຮັບຜິດຊອບເອງ;

5.12 ກໍລະນີລູກຄ້າຜູ້ໃຊ້ບໍລິການ ໂອນໄປຜິດບັນຊີປາຍທາງ ແມ່ນຕົນເອງຕ້ອງທວງນຳບັນຊີປາຍທາງເອງ ເຊິ່ງຂໍ້ມູນບັນຊີປາຍທາງດັ່ງກ່າວ ທຄຮ ຈະເປັນຜູ້ສະໜອງໃຫ້ ຕາມລະບຽບການ.

## 6. ລາຍການທີ່ບໍ່ສຳເລັດ

6.1 ຊ່ວງເວລາທີ່ລະບົບຢຸດດຳເນີນການຊົ່ວຄາວ ຫຼື ສະຫຼຸບປະມວນຜົນ (ເວລາ Cut-off) ອາດຈະຖືກແຈ້ງປະຕິເສດໃນການດຳເນີນການ ຫຼື ຖືກດຳເນີນການ ໃນວັນລັດຖະການຖັດໄປ ໂດຍອັດຕະໂນມັດ;

6.2 ລະບົບ JDB Online Banking ບໍ່ຮັບຮອງການປ້ອນຂໍ້ມູນຕົວພິມພາສາລາວ;

6.3 ຄວາມບົກຜ່ອງຂອງລະບົບຄອມພິວເຕີ ແລະ ລະບົບການສື່ສານຂອງລູກຄ້າ ຫຼື ລະບົບເຄືອຂ່າຍໃຫ້ບໍລິການອິນເຕີເນັດ;

6.4 ບັນຫາລະບົບຂັດຂ້ອງທາງດ້ານເຕັກນິກຊົ່ວຄາວ;

6.5 ບັນຫາດ້ານໄພທຳມະຊາດ ເຊັ່ນ: ນ້ຳຖ້ວມ, ຟ້າຜ່າ, ລົມພະຍຸ, ເຫດສຸດວິໄສອື່ນໆ ທີ່ເຮັດໃຫ້ທຸລະກຳການເງິນບໍ່ສາມາດດຳເນີນການໄດ້;

6.6 ລູກຄ້າຜູ້ໃຊ້ບໍລິການ ໃສ່ລະຫັດຜິດເກີນ 5 ຄັ້ງ USER ID ຈະຖືກລະງັບການນຳໃຊ້ຊົ່ວຄາວ ໂດຍອັດຕະໂນມັດ;

6.7 ບັນຫາທີ່ເກີດຈາກລູກຄ້າຜູ້ໃຊ້ບໍລິການ ເຊັ່ນ: ໂອນເງິນຜິດ, ລະບຸເລກບັນຊີຜິດ ຫຼື ຖືກສໍ້ໂກງຊັບ ແລະ ອື່ນໆ.

## 7. ວ່າດ້ວຍລູກຄ້າຜູ້ໃຊ້ບໍລິການ

ລູກຄ້າຜູ້ໃຊ້ບໍລິການ ຍິນຍອມ, ຮັບຊາບ ແລະ ຕົກລົງກັບ ທຄຮ ດັ່ງນີ້:

7.1 ລູກຄ້າຍອມຮັບ ແລະ ຮັບຮູ້ການປ່ຽນແປງຂໍ້ກຳນົດ ແລະ ເງື່ອນໄຂ, ວົງເງິນສູງສຸດໃນການໂອນຕໍ່ມື້ ແລະ ອັດຕາຄ່າທຳນຽມຕ່າງໆ ຕາມລະບຽບຂອງ ທຄຮ ທີ່ກຳນົດອອກ ໃນແຕ່ລະໄລຍະ;

7.2 ລູກຄ້າຍິນຍອມຈ່າຍຄ່າທຳນຽມ, ຄ່າໃຊ້ຈ່າຍຕ່າງໆ ໂດຍໃຫ້ ທຄຮ ຫັກຈາກບັນຊີເງິນຝາກປະຢັດ ຫຼື ກະແສລາຍວັນຂອງລູກຄ້າ ຕາມລະບຽບ ແລະ ເງື່ອນໄຂ ທີ່ ທຄຮ ໄດ້ກຳນົດອອກ ໃນແຕ່ລະໄລຍະ;

7.3 ກ່ອນການເຮັດລາຍການທຸລະກຳການເງິນ ລູກຄ້າຮັບປະກັນແລ້ວວ່າ ຍອດເງິນເຫຼືອໃນບັນຊີຂອງຕົນມີພຽງພໍຕໍ່ການເຮັດທຸລະກຳ ແລະ ຫັກຄ່າທຳນຽມຕ່າງໆ ຕາມລະບຽບຂອງ ທຄຮ.

7.4 ລູກຄ້າຜູ້ໃຊ້ບໍລິການ ຈະບໍ່ອັບເດດຂໍ້ມູນເລກບັນຊີ, User ID, Password, ລະຫັດໂອນເງິນຈາກສື່ຫຼອກລວງຕາມລິ້ງໃນເວັບໄຊ, ຂໍ້ຄວາມສັ້ນ ແລະ ສື່ໂຄສະນາອອນລາຍທີ່ບໍ່ແມ່ນມາຈາກເວັບໄຊຫຼັກຂອງ ທຄຮ, ເມື່ອພົບເຫັນກໍລະນີສົງໄສດັ່ງກ່າວ ຕ້ອງແຈ້ງ ທຄຮ ຮັບຊາບ;

7.5 ການຊຳລະສະສາງຄ່າສາທາລະນຸປະໂພກ ຫຼື ຜະລິດຕະພັນອື່ນໆຂອງ ທຄຮ ຜ່ານ JDB Online Banking ລູກຄ້າຜູ້ໃຊ້ບໍລິການ ຕ້ອງປະຕິບັດຕາມຄູ່ມື, ຄຳແນະນຳ, ລົງທະບຽນເຂົ້ານຳໃຊ້ ບໍລິສັດ ຜູ້ໃຫ້ບໍລິການ ແລະ ຂໍ້ມູນຜູ້ຊຳລະໃຫ້ຖືກຕ້ອງ. ໃນກໍລະນີ ລູກຄ້າຊຳລະຜິດພາດໃຫ້ພົວພັນກັບ ທຄຮ ທັນທີ;

7.6 ລູກຄ້າຜູ້ໃຊ້ບໍລິການ ຕ້ອງ Login ເຂົ້າລະບົບຜ່ານເວັບໄຊ ຫຼື ຊ່ອງທາງ Mobile Application ຂອງ ທຄຮ ເທົ່ານັ້ນ (ໝາຍເຫດ: Mobile Application ໃຊ້ໄດ້ສະເພາະລະບົບ IOS ແລະ Android, ສ່ວນ Mobile ຫຼື Tablet ທີ່ບໍ່ໄດ້ໃຊ້ 2 ລະບົບນີ້ສາມາດເຂົ້າ Login ຜ່ານ Mobile Browser);

7.7 ລູກຄ້າຜູ້ໃຊ້ບໍລິການ ທີ່ບໍ່ປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ທີ່ກ່ຽວຂ້ອງກັບການບໍລິການ JDB Online Banking ຂອງ ທຄຮ ເຊິ່ງເປັນສາເຫດເຮັດໃຫ້ຖືກຢຸດຕິການໃຫ້ບໍລິການ ທັນທີ;

7.8 ຖ້າລູກຄ້າຜູ້ໃຊ້ບໍລິການ ຍັງບໍ່ເຂົ້າໃຈແຈ້ງບາງເນື້ອໃນ ຫຼື ເງື່ອນໄຂ ຂອງການໃຫ້ບໍລິການ ຄວນສອບຖາມພະນັກງານ ທຄຮ ທີ່ກ່ຽວຂ້ອງ ເພື່ອຂໍຄຳອະທິບາຍໃຫ້ຈະແຈ້ງ.

## 8. ການແກ້ໄຂຂໍ້ຂັດແຍ່ງ

ກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນຈາກການນຳໃຊ້ບໍລິການ JDB Online Banking ລະຫວ່າງ ທຄຮ ແລະ ລູກຄ້າຜູ້ໃຊ້ບໍລິການ ໃຫ້ປຶກສາຫາລືກັນ ແລະ ຮ່ວມມືກັນແກ້ໄຂບັນຫາໂດຍສັນຕິ, ແຕ່ຖ້າບໍ່ສາມາດແກ້ໄຂຮ່ວມກັນໄດ້ ຝ່າຍກ່ຽວຂ້ອງສາມາດສະເໜີຂໍ້ຂັດແຍ່ງດັ່ງກ່າວ ຕາມຂະບວນການຍຸຕິທຳຂອງ ສປປ ລາວ.

## 9. ການຈັດຕັ້ງປະຕິບັດ

ຂໍ້ກຳນົດ, ເງື່ອນໄຂ ແລະ ເອກະສານຄັດຕິດທີ່ກ່ຽວຂ້ອງກັບການໃຊ້ບໍລິການ JDB Online Banking ຂອງ ທຄຮ ລູກຄ້າໄດ້ອ່ານ, ເຂົ້າໃຈ, ຮັບຮູ້ ແລະ ຍິນຍອມປະຕິບັດໃຫ້ຖືກຕ້ອງທຸກປະການ ເຊິ່ງບັນດາເອກະສານດັ່ງກ່າວ ມີຜົນບັງຄັບໃຊ້ນັບແຕ່ວັນທີລູກຄ້າໃຫ້ຂໍ້ມູນ, ລົງລາຍເຊັນ ແລະ ປະທັບຕາໃສ່ແບບຟອມຂໍນຳໃຊ້ບໍລິການເປັນຕົ້ນໄປ.

| | |
|---|---|
| ວັນທີ:___/___/___ | ວັນທີ:___/___/___ |
| **ພະນັກງານ ທຄຮ** | **ເຈົ້າຂອງບັນຊີ** |

## Terms and Conditions of JDB Online Banking Service

JDB Online Banking is an Internet Banking Service by allowing customers with the effective accessibility and management of their financial transactions under the current and upcoming services as provided by JDB. The customers shall agree to comply under these following terms and conditions:

**Article 1 Definition of Terms**

1.1 **JDB**: JOINT DEVELOPMENT BANK

1.2 **JDB Online Banking**: An Online Banking Service provided by JDB, allowing customers to access JDB service for 24 hours via the Internet network.

1.3 **Account Holder/Customer:** an entity or a deposit account holder who has rights to manage any payment orders, deposit account and be able to apply for JDB Online Banking service under the regulations of the Bank and the laws of Lao PDR.

1.4 **PIN Envelope:** An envelope containing (User ID), Password, TOKEN OTP device (OTP Token), SMS OTP, Email OTP…

**Article 2 JDB Online Banking User `s Requirement**

2.1 Must own or hold at least one saving or current account with JDB;
2.2 Must obtain a device that supports JDB Online Banking system such as Computers, Smartphones, Internet Network and etc…;
2.3 Must be at least higher than 15 years of age and shall have a valid phone number, mobile phones and email;
2.4 Must correctly complete the forms and relevant attachments as provided by JDB.

**Article 3 Scope of JDB Online Banking Service**

3.1 The customers are able to transfer money to other accounts in the amount as specified by JDB Such as Product Payments, utility bills and other Service charges;

3.2 The customer are able to open a fixed deposit account by transferring money from a savings account or current account as provided by JDB Online Banking service, which are counted as the same information and payment conditions;

3.3 The customers are able to choose the fixed deposit period and interest payment`s terms and conditions via JDB Online Banking system; they can decide to get their own account book or no need account book is totally fine. It depends on their requirements. If the customers are willing to get the account book, the customers need to provide the details of the User ID and Customer ID to verify at the service unit where the customer has applied for JDB Online Banking Service. If the customers do not wish to get an account book, when it comes to the due time, the system shall automatically close the fixed deposit account by transferring the principal and interest amount to the customer's savings or current account. In case the customers want to close the fixed deposit account before the due time, the customers are required to complete the application form at the service unit where it opens for the deposit account of requesting JDB Online Banking service.

**Article 4 Rights and Responsibilities of JDB**

4.1 JDB has the rights to modify the terms and conditions in whole or any part, including fees and charges under the policy of JDB service periodically without prior notice;

4.2 JDB reserves the right to suspend some or all of its services or to provide its services to a specific customers group without prior notice;

4.3 JDB reserves the right to terminate or cancel the service at any time without notifying the customer in the event that JDB is unable to deduct the monthly service fee from the customer's account and JDB has the right to collect any remaining fees from the customer;

4.4 JDB has the right to disable the User`s access to the service if the bank identifies that the customer has not complied with these terms and conditions under JDB Online Banking service;

4.5 In case if the customer who uses the financial transaction service through JDB Online Banking system illegally or violates the rules of JDB, JDB shall conduct the prosecution to the customer in accordance with the laws and regulations;

4.6 The Bank shall be response to send SMS Alert at any time if the bank identifies there is an activity in the customer`s account who has registered to use JDB online banking service;

4.7 JDB shall not be responsible for any damages due to the non-compliance of the customer in the event that customer has used the unsafe link and updated the information to other person that may causes any damages to the customer;

4.8 JDB shall not be responsible for any damages that incurred prior to the suspension or cancellation of the JDB Online Banking service by the Customer;

4.9 JDB shall not be responsible for any damages in the event that the customer violates the rules of money transfer in the system.

**Article 5 Rights and Responsibilities of the Customer**

5.1 Once the customer receives a PIN code (PIN) from JDB to login into the system for the first time, the customer shall automatically be required to change into new password as provided in the Banking system procedures;

5.2 The customer shall securely keep the User ID, Password and security questions, in case if the customer forgets the password or usage information, the customer can press ``forget`` the password and change the password in online platform with the account verification.

5.3 To modify or change any deposit account information, the Customer shall contact JDB by holding an ID card and deposit account book as the document verification.

5.4 The customer shall be willing to cooperate in monitoring all of the customer`s financial transactions related to the use of the service when it comes to the information requirement from an authorized government official or in accordance with the policy of JDB;

5.5 The customer who has applied for registration shall complete the application form by signing it correctly and completely under the deposit account`s terms and conditions. In case if the individual customer or legal entity who is not the owner of the deposit account, they come to apply for the registration, that shall be required to make a letter of authorization for the representative of the registration;

5.6 If two or more co-signatures are required, they shall be requested to complete and sign on JDB Online Banking application form. Then the JDB online banking service will be activated and opened;

5.7 The customer shall follow the procedures, manuals, instructions, regulations, rules, notices as provided by JDB periodically;

5.8 In case of any suspicion of transaction activity in its own account occurred; the customer shall notify these kinds of translations to JDB immediately for any investigation;

5.9 In transferring money to another account, there shall be security protection that the customer is firstly requested to answer the Security Question. In case if the customer forgets the security questions, the customer is required to contact JDB immediately in order to complete the renewed security question`s application form by the formal working day of JDB;

5.10 The customer who has applied for JDB Online Banking Service shall securely keep their User ID, Password, OTP code and other passwords. Any person who knows the User ID, Password that can login into the customer`s account, JDB shall be considered as the customer`s transaction activity;

5.11 In the event that the customer`s account information who has applied for JDB Online Banking Service is disclosed to another person resulting from the action of the customer itself, the customer shall be responsible for this unexpected circumstance;

5.12 In the event that the customer who uses the JDB Online Banking service has transfer funds or Money to the wrong destination account, the customer shall contact and claim with that destination account itself, the information of the destination account shall be provided by JDB under the laws and regulations.

**Article 6 Incomplete Transactions**

6.1 In the period of time that the financial transaction system is temporarily shut down or the transaction is in processing (cut-off time) or the transactions

may be automatically canceled or resumed on the next business day (formal working day);

6.2 JDB Online Banking system is unable to support Lao letter input;

6.3 A malfunction to computer systems, telecommunication systems of the User (Customer) or the Internet providers that cause some problems to the transactions;

6.4 The system may not be available due to any temporary technical problems;

6.5 Natural disasters that cause the system to be unable to access the financial transactions such as flood, lightning, electricity blackout, thunderstorm, another force majeure etc.;

6.6 The Customer has entered an invalid code or incorrect password over 5 times; USER ID may be suspended automatically;

6.7 The problems which are caused by the customer, such as incorrect fund transfer, incorrect beneficiary information, incorrect account number, or Property fraud and etc.

**Article 7 The User (The Customer who applies for JDB Online banking Service)**

The User or The customer consciously understands, complies and agrees with these following terms and conditions:

9.1 The customer shall acknowledge and accept the changes under the terms and conditions, the maximum amount to be transferred per day and the various fee rates in accordance with the rules and regulations which is provided by JDB periodically;

9.2 The customer agrees to pay the fees and other expenses by deducting from the customer's savings account or current account in accordance with the rules and conditions as specified by JDB periodically;

9.3 Prior to complete the financial transaction, the customer shall ensure that the balance in the customer`s account is sufficient for any financial transaction and bank fee deduction in accordance with the rules and regulations of JDB.

9.4 Customers shall not update the account number, User ID, Password, money transfer code from fraudulent media, the unsafe website links, short messages or any other online advertising media which are not from the website of JDB. In case of any suspicion cases, the customer shall inform these kind of circumstances to JDB immediately;

9.5 Payment of any utility bills or other products of the Bank through JDB Online Banking, the Customers shall follow the manuals, instructions, banking service registration as well as be able to provide the correct payment information. In case of the customer makes any incorrect payment, please contact JDB immediately;

9.6 Customers shall login via the website, Platform or channel of the Mobile Application of JDB only (Note: Mobile Application can be used only for IOS and Android, for any Mobile or Tablet devices which haven`t used these two systems, they can login via Mobile Browser);

9.7 In the event that Customers who do not comply with the terms and conditions related to JDB Online Banking service of JDB. That may causes the customer`s Online Banking service to be terminated or suspended immediately;

7.8 In case of the customers do not understand some of the content or terms and conditions of the service; the customers shall contact the relevant JDB officers for a detailed explanation.

**Article 8 Dispute Resolution**

If there is any dispute arising in connection with JDB Online Banking services between JDB and Customers, such a dispute shall be resolved by discussion and negotiation methods. In case of any failure to the resolution, the relevant parties may take legal action according to their rights under the justice system and legal prosecution of the Lao PDR.

**Article 9 Implementation**

These JDB Online Banking`s terms and conditions together with relevant attached documents for JDB online banking as provided by Joint Development Bank (JDB), the customer shall hereby be read, understood, acknowledged, and agreed to all circustances. Therefore, the terms and conditions within this document shall be effective from the date when the customer duly signs and seals into the application form onward.

These Terms and Conditions of JDB Online Banking Service was translated by BTS Translation Service